# ການບໍລິການເພີ່ມເຕີມ

ທ່ານອາດສາມາດຮັບເອົາການບໍລິການອື່ນໆ ເພື່ອຊ່ວຍເຫຼືອຕົວທ່ານເອງ ແລະຄອບຄົວຂອງທ່ານໃນຂະນະທີ່ທ່ານເຮັດວຽກໃນການບັນລຸເປົ້າໝາຍຂອງ Cal-Learn. ການບໍລິການເພີ່ມເຕີມອາດລວມມີ:

## WIC

ໂຄງການຊ່ວຍເຫຼືອຜູ້ຍິງ, ທາລົກ ແລະເດັກນ້ອຍ (Women, Infants and Children program), ຊຶ່ງຮູ້ຈັກກັນດີໃນຊື່ WIC, ແມ່ນໂຄງການຊ່ວຍເຫຼືອ ເພີ່ມເຕີມດ້ານອາຫານ ແລະໂພຊະນາການ ທີ່ອາດຊ່ວຍໃນການໃຫ້ຄວາມຮູ້ແກ່ທ່ານໃນດ້ານໂພຊະນາການ, ໃຫ້ອາຫານທີ່ມີປະໂຫຍດ ແລະໃຫ້ຄຳແນະນຳ ໃນດ້ານການລ້ຽງລູກດ້ວຍນົມແມ່.

## CalFresh

ພາຍໃຕ້ໂຄງການນີ້ ທ່ານສາມາດຮັບເອົາການຊ່ວຍເຫຼືອໃນການຊື້ອາຫານ ສຳລັບຄອບຄົວຂອງທ່ານ.

## Medi-Cal

ຜ່ານໂຄງການ Medi-Cal ທ່ານສາມາດຮັບເອົາການເບິ່ງແຍງໃນຊ່ວງກ່ອນຄອດລູກ ແລະການກວດສຸຂະພາບຫຼັງຈາກທ່ານອອກລູກແລ້ວ. ທ່ານຍັງອາດມີເງື່ອນໄຂໄດ້ຮັບການເບິ່ງແຍງສຸຂະພາບທົ່ວໄປດ້ວຍ. ລູກເກີດໃໝ່ຂອງທ່ານຍັງອາດໄດ້ຮັບການບໍລິການດ້ານການປິ່ນປົວ ເຊັ່ນການສັກຢາປ້ອງກັນພະຍາດແລະການເບິ່ງແຍງໃຫ້ທາລົກມີສຸຂະພາບດີ.



## ການບໍລິການວາງແຜນຄອບຄົວ

ເມື່ອທ່ານອອກລູກແລ້ວ, ທ່ານຄວນຈະຕ້ອງພິຈາລະນາທາງເລືອກຕ່າງໆ ໃນການຄຸມກຳເນີດຂອງທ່ານ. ມີການບໍລິການວາງແຜນຄອບຄົວແບບບໍ່ເສັຽຄ່າແລະລາຄາຕ່ຳໃຫ້ແກ່ທ່ານ ເພື່ອຊ່ວຍທ່ານໃນການຄຸມກຳເນີດ. ທ່ານໝໍຂອງທ່ານສາມາດແນະນຳທ່ານກ່ຽວກັບວິທີການຄຸມກຳເນີດທີ່ເໝາະສົມທີ່ສຸດສຳລັບທ່ານ. ມັນສຳຄັນທີ່ຈະຮູ້ວ່າຜູ້ຍິງສາມາດຖືພາໄດ້ອີກໃນຊ່ວງທີ່ລ້ຽງລູກດ້ວຍນົມແມ່.

ການບໍລິການຊ່ວຍເຫຼືອອື່ນໆ ຍັງອາດມີໃຫ້ທ່ານ. ຂໍໃຫ້ປຶກສາກັບ ຜູ້ຈັດການກໍລະນີຂອງທ່ານ ເພື່ອຮູ້ຂໍ້ມູນຕື່ມ ແລະການຊ່ວຍເຫຼືອ.

ກ່ອງຕາປະທັບຂອງຄາວຕີ້

สຳລັບຂໍ້ມູນເພີ່ມເຕີມກ່ຽວກັບ Cal-Learn, ຈົ່ງຕິດຕໍ່:

ທຸກຄົນທີ່ຢູ່ໃນຮູບແມ່ນນາງແບບ ແລະນຳໃຊ້ເພື່ອຈຸດປະສົງໃນການເປັນພາບປະກອບເທົ່ານັ້ນ.

**State of California**
**ຣັຖຄາລິຟໍເນັຽ**

**Health and Human Services Agency**
**ອົງການສາທາລະນະສຸກແລະປະສາສົງເຄາະ**

**Department of Social Services**
**ພະແນກປະຊາສົງເຄາະ**

**PUB 367 (Lao) (04/13)**



# ບັນລຸຄວາມຝັນຂອງທ່ານດ້ວຍ Cal-Learn



ໂຄງການຊ່ວຍເຫຼືອທົ່ວຣັຖທີ່ຈະຊ່ວຍຜູ້ຍິງຖືພາ ແລະວັຍລຸ້ນທີ່ເປັນພໍ່ແມ່ຊື່ງ ເປັນຜູ້ທີ່ກຳລັງຮັບການຊ່ວຍເຫຼືອຈາກ CalWORKs/TANF ໃຫ້ສາມາດຈົບການສຶກສາຈາກໂຮງຮຽນມັດທະຍົມປາຍໄດ້, ກາຍເປັນຜູ້ມີອິດສະຫຼະໃນການເພິ່ງພາຕົນເອງ ແລະສ້າງຄອບຄົວທີ່ແຂງແຮງໄດ້.

# Cal-Learn ແມ່ນຫຍັງ?

Cal-Learn ແມ່ນໂຄງການທີ່ມີທົ່ວຣັຖສຳລັບຜູ້ຍິງຖືພາ ແລະບັນດາວັຍລຸ້ນທີ່ ເປັນພໍ່ແມ່, ທັງຜູ້ເປັນພໍ່ແລະແມ່, ທີ່ໄດ້ຮັບການຊ່ວຍເຫຼືອຈາກ CalWORKs/TANF. ມັນບໍ່ແມ່ນໂຮງຮຽນ. ເປົ້າໝາຍຂອງໂຄງການ Cal-Learn ແມ່ນເພື່ອຊ່ວຍບັນດາວັຍລຸ້ນໃຫ້ສາມາດຈົບການສຶກສາຈາກໂຮງຮຽນມັດທະຍົມປາຍ, ກາຍເປັນຜູ້ມີອິດສະຫຼະເພິ່ງພາຕົນເອງໄດ້ ແລະສ້າງຄອບຄົວທີ່ແຂງແຮງໄດ້.

## ຂ້ອຍຈຳເປັນຕ້ອງເຂົ້າຮ່ວມບໍ່?

ຖ້າຫາກ ທ່ານຖືພາ ຫຼື ເປັນວັຍລຸ້ນທີ່ມີລູກຊຶ່ງກຳລັງໄດ້ຮັບ CalWORKs/TANF, ທ່ານຕ້ອງເຂົ້າຮ່ວມໃນໂຄງການ Cal-Learn. ວັຍລຸ້ນບາງຄົນໄດ້ຮັບການຍົກເວັ້ນຈາກໂຄງການ ຫຼື ເຂົ້າຮ່ວມໂຄງການໃນພາຍຫຼັງໄດ້ ພາຍໃຕ້ສະພາບການພິເສດຕ່າງໆ.

## ເພື່ອໃຫ້ມີເງື່ອນໄຂເໝາະສົມສຳລັບ Cal-Learn ທ່ານຕ້ອງ:

- ອາສັຍ ຢູ່ໃນຄົວເຮືອນດຽວກັນກັບລູກຂອງທ່ານ
- ອາຍຸຕ່ຳກວ່າ 19 ປີ
- ຍັງບໍ່ມີໃບປະກາສະນິຍະບັດຈົບໂຮງຮຽນມັດທະຍົມປາຍ ຫຼື GED ເທື່ອ
- ບໍ່ຢູ່ໃນເຮືອນອຸປະຖັມ



ສຳລັບຂໍ້ມູນເພີ່ມເຕີມ ແລະລາຍລະອຽດກ່ຽວກັບການເຂົ້າຮ່ວມໃນ Cal-Learn ຂໍໃຫ້ປຶກສາກັບເຈົ້າໜ້າທີ່ໂຄງການ Cal-Learn ປະຈຳຄາວຕີຂອງທ່ານ.

# ການຮັບເອົາໃບປະກາສະນິຍະບັດຂອງທ່ານ

ເມື່ອທ່ານຢູ່ໃນໂຄງການ Cal-Learn ທ່ານຈະມີຜູ້ຈັດການກໍລະນີທີ່ຈະຄອຍ ຊ່ວຍທ່ານໃນການພັດທະນາແຜນການໃນການຈົບໂຮງຮຽນມັດທະຍົມປາຍ ຫຼື ໄດ້ຮັບ GED. ຖ້າຫາກ ໃນປັດຈຸບັນນີ້ ທ່ານບໍ່ໄດ້ໄປຮຽນ, ຜູ້ຈັດການກໍລະນີ ຂອງທ່ານຈະຊ່ວຍທ່ານໃນການກັບຄືນໄປຮຽນໃນໂຮງຮຽນ ຫຼື ຊອກຫາ ໂຮງຮຽນທີ່ເໝາະສົມສຳລັບທ່ານເພື່ອໃຫ້ບັນລຸຄວາມຕ້ອງການຂອງທ່ານ. ໂຄງການລວມມີ:



ການປະເມີນຜົນ ເພື່ອພິຈາລະນາເບິ່ງວ່າ ການບໍລິການ ແລະການສະໜັບສະນູນຊ່ວຍເຫຼືອຫຍັງແດ່ທີ່ທ່ານຕ້ອງການ ເພື່ອທີ່ທ່ານຈະສາມາດບັນລຸເປົ້າໝາຍທາງການສຶກສາຂອງທ່ານໄດ້.

ພັດທະນາແຜນ ເພື່ອໃຫ້ທ່ານສາມາດຮັບເອົາການບໍລິການຕ່າງໆ ທີ່ທ່ານ ຕ້ອງການ ແລະໃນການໄປໂຮງຮຽນ.

ລົງມືປະຕິບັດ ເພື່ອໃຫ້ທ່ານໄດ້ຢູ່ໃນເສັ້ນທາງທີ່ຈະບັນລຸເປົ້າໝາຍຂອງທ່ານ.

ຕິດຕາມຜົນ ເພື່ອຮັບປະກັນວ່າ ທ່ານກຳລັງສ້າງຄວາມກ້າວໜ້າເພື່ອບັນລຸເປົ້າໝາຍໄດ້ຮັບປະກາສະນິຍະບັດ ຫຼື GED ແລະເປົ້າໝາຍອື່ນໆ.

ກວດກາຄືນແຜນເປັນລະຍະ ເພື່ອຊອກເບິ່ງວ່າ ມີສິ່ງໃດແດ່ທີ່ໃຊ້ການໄດ້ ແລະສິ່ງໃດທີ່ໃຊ້ການບໍ່ໄດ້.

# ຮັບເອົາໂບນັດເງິນສົດ ຫຼື ການລົງໂທດ

Cal-Learn ໃຫ້ລາງວັນຜົນການຮຽນດີໃນໂຮງຮຽນ ແລະລົງໂທດສຳລັບ ຜົນການຮຽນທີ່ບໍ່ດີໃນໂຮງຮຽນ.

## ຮຽນດີ ແລະຮັບເອົາໂບນັດ:

ໄດ້ຮັບເກຣດຄະແນນດີ ແລະສົ່ງບັດລາຍງານຜົນການຮຽນໃນແຕ່ລະຄັ້ງທີ່ອອກ = $100 ຕື່ມໃສ່ທຶນຂອງຄອບຄົວສຳລັບແຕ່ລະໄລຍະທີ່ອອກບັດຜົນການຮຽນ. ຈົບການສຶກສາຈາກໂຮງຮຽນມັດທະຍົມປາຍ = $500 ໃຫ້ແກ່ທ່ານ.

## ຮຽນບໍ່ດີ ແລະໄດ້ຮັບໂທດ:

ໄດ້ຮັບເກຣດຄະແນນຕ່ຳກວ່າລະດັບສະເລ່ຍ D ແລະບໍ່ສົ່ງບັດລາຍງານຜົນການຮຽນໃນແຕ່ລະຄັ້ງທີ່ອອກ = ຫັກ $100 ອອກຈາກທຶນຂອງຄອບຄົວສຳລັບແຕ່ລະໄລຍະທີ່ອອກບັດຜົນການຮຽນ.

# ການຈັດການກໍລະນີເພື່ອຄວາມສຳເລັດຂອງທ່ານ

ຜູ້ຈັດການກໍລະນີຂອງທ່ານຈະຊ່ວຍທ່ານຫຼາຍເລື່ອງບໍ່ພຽງແຕ່ເລື່ອງໂຮງຮຽນ ເທົ່ານັ້ນ. ມີບໍລິການສະໜັບສະໜູນທີ່ຫຼາກຫຼາຍໃຫ້ທ່ານ ເພື່ອຊ່ວຍໃຫ້ທ່ານ ເອົາຊະນະບັນຫາທ້າທາຍຕ່າງໆ ທີ່ທ່ານປະເຊີນໃນຖານະເປັນພໍ່ແມ່ ທີ່ຍັງເປັນວັຍລຸ້ນ ເຊັ່ນ:

## ຄ່າໃຊ້ຈ່າຍໃນການເບິ່ງແຍງເດັກ

ໂຄງການ Cal-Learn ອາດຊ່ວຍຈ່າຍຄ່າຝາກເດັກໃນຂະນະທີ່ທ່ານໄປ ໂຮງຮຽນ. ຖ້າຫາກ ທ່ານກຳລັງເຮັດວຽກ ແລະໄປໂຮງຮຽນ, ທ່ານກໍ່ອາດ ມີເງື່ອນໄຂໄດ້ຮັບຄ່າຝາກເດັກໃນຂະນະທີ່ທ່ານໄປເຮັດວຽກດ້ວຍ.

## ຄ່າໃຊ້ຈ່າຍໃນການຮຽນ

ການທົດສອບ GED, ປຶ້ມຕ່າງໆ ແລະຄ່າໃຊ້ຫ້ອງທົດລອງ ແລະບາງຢ່າງ ທີ່ທາງໂຄງການ Cal-Learn ອາດຊ່ວຍຊື້ໃຫ້ທ່ານໃນການຮ່ຳຮຽນ.

## ຄ່າໃຊ້ຈ່າຍດ້ານການເດີນທາງ

ທ່ານອາດໄດ້ຮັບການຊ່ວຍເຫຼືອໃນການຈ່າຍຄ່າເດີນທາງໄປແລະກັບໂຮງຮຽນ ໄດ້.

## ການບໍລິການສະໜັບສະໜູນ

ຜູ້ຈັດການກໍລະນີຂອງທ່ານອາດສົ່ງຕໍ່ທ່ານໄປຫາອົງການອື່ນໆ ທີ່ສາມາດຈັດການກັບບັນຫາຄວາມກັງວົນໃຈຫຼາກຫຼາຍທີ່ທ່ານອາດປະເຊີນ ລວມເຖິງ:

- ບັນຫາທາງກົດໝາຍ
- ບັນຫາທາງສຸຂະພາບ
- ຄວາມຮຸນແຮງໃນຄອບຄົວ
- ທີ່ພັກອາໄສ